ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ, ຫ້ອງການ ທຫລ
ໂທ/ແຟັກ 856 21 213109, 213110



# ທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ ເຂົ້າຮ່ວມກອງປະຊຸມສຸດຍອດ ຈີນ-ອາຊຽນ ວ່າດ້ວຍການຮ່ວມມື ແລະ ການພັດທະນາດ້ານການເງິນ ຄັ້ງທີ 15




ໃນລະຫວ່າງວັນທີ 17-18 ກັນຍາ 2023, ທ່ານ ບຸນເຫຼືອ ສິນໄຊວໍຣະວົງ, ຜູ້ວ່າການທະນາຄານແຫ່ງ ສປປ ລາວ ໄດ້ນຳພາຄະນະຜູ້ແທນຂອງທະນາຄານແຫ່ງ ສປປ ລາວ ເຂົ້າຮ່ວມກອງປະຊຸມສຸດຍອດ ຈີນ-ອາຊຽນ ວ່າດ້ວຍການຮ່ວມມື ແລະ ການພັດທະນາດ້ານການເງິນ ຄັ້ງທີ 15 ຢູ່ເມືອງໜານໜີງ, ເຂດປົກຄອງຕົນເອງກວາງຊີ ໂດຍປະກອບມີ ຄະນະພັກ-ຄະນະນຳ ຂອງເຂດປົກຄອງຕົນເອງກວາງຊີ, ບັນດາການນຳຈາກອົງການຄຸ້ມຄອງດ້ານການເງິນ, ບັນດາຜູ້ວ່າການ ແລະ ຕົວແທນທະນາຄານກາງຈາກບັນດາປະເທດອາຊຽນ ແລະ ບັນດາສະຖາບັນການເງິນ ລວມທັງທະນາຄານທຸລະກິດ, ບໍລິສັດປະກັນໄພ, ຕະຫຼາດຫຼັກຊັບ ແລະ ບໍລິສັດຫຼັກຊັບ ເຂົ້າຮ່ວມ.

ກອງປະຊຸມສຸດຍອດດັ່ງກ່າວ ແມ່ນກອງປະຊຸມປີ່ນອ້ອມງານວາງສະແດງສິນຄ້າ ຈີນ-ອາຊຽນ ຄັ້ງທີ 20 (The 20th CAEXPO) ແລະ ກອງປະຊຸມສຸດຍອດການຄ້າ-ການລົງທຶນ ຈີນ-ອາຊຽນ ຄັ້ງທີ 20 (The 20th CABIS) ຊຶ່ງເປັນເວລາທີແລກປ່ຽນທັດສະນະຮ່ວມກັນ ລະຫວ່າງ ລັດຖະບານ ສປ. ຈີນ ແລະ ບັນດາປະເທດສະມາຊິກອາຊຽນ ໂດຍໃນປີນີ້ໄດ້ຈັດຂຶ້ນພາຍໃຕ້ຫົວຂໍ້ “**ຍົກສູງການພັດທະນາ ແລະ ບໍລິການທາງດ້ານການເງິນພາຍໃຕ້ໂຄງການໜຶ່ງແລວ, ໜຶ່ງເສັ້ນທາງ**”.

ໃນກອງປະຊຸມດັ່ງກ່າວ, ທ່ານ ຜູ້ວ່າການທະນາຄານແຫ່ງ ສປປ ລາວ ໄດ້ຮັບກຽດໃຫ້ຂຶ້ນກ່າວມີຄໍາເຫັນຕໍ່ກອງປະຊຸມ ເຊິ່ງທ່ານໄດ້ຍົກໃຫ້ເຫັນເຖິງຜົນສໍາເລັດທີ່ ສປປ ລາວ ຍາດມາໄດ້ພາຍໃຕ້ໂຄງການ "**ໜຶ່ງແລວໜຶ່ງເສັ້ນທາງ**" ໂດຍສະເພາະໂຄງການເສັ້ນທາງລົດໄຟ ລາວ-ຈີນ ແລະ ໂຄງການທາງດ່ວນ ລາວ-ຈີນ ທີ່ໄດ້ນໍາເອົາຜົນປະໂຫຍດມະຫາສານມາສູ່ປະຊາຊົນລາວ ກໍ່ຄືການຮ່ວມມືທາງດ້ານເສດຖະກິດ, ການຄ້າ ແລະ ການລົງທຶນ ລະຫວ່າງ ສປປ ລາວ ແລະ ສປ ຈີນ ໄດ້ຮັບການຍົກລະດັບເຂົ້າສູ່ລວງເລິກ.

ນອກນັ້ນ, ເນື່ອງໃນໂອກາດທີ່ ສປປ ລາວ ຈະເປັນເຈົ້າພາບອາຊຽນໃນປີ 2024 ທີ່ຈະມາເຖິງນີ້ ທ່ານຜູ້ວ່າການ ກໍ່ໄດ້ເນັ້ນຕໍ່ກອງປະຊຸມຊາບກ່ຽວກັບວິໄສທັດດ້ານວຽກງານການເງິນ-ການທະນາຄານຂອງ ສປປ ລາວ ວ່າຈະໃຫ້ຄວາມສໍາຄັນ ແລະ ຈະຊຸກຍູ້ວຽກງານການເຊື່ອມຕໍ່ ລະບົບການຊໍາລະສະສາງຂ້າມແດນ ແລະ ການນໍາໃຊ້ສະກຸນເງິນທ້ອງຖິ່ນເຂົ້າໃນການຊໍາລະການຄ້າສອງຝ່າຍໃຫ້ຫຼາຍຂຶ້ນ. ໃນທ່າມກາງທີ່ໂລກພວມປະເຊີນກັບຄວາມບໍ່ແນ່ນອນຫຼາຍຂຶ້ນ, ທ່ານຜູ້ວ່າ ການທະນາຄານແຫ່ງ ສປປ ລາວ ໄດ້ເນັ້ນໜັກວ່າອາຊຽນ ແລະ ສປ ຈີນ ຄວນເພີ່ມທະວີຮ່ວມມືກັນຢ່າງໜັກແໜ້ນ ແລະ ອາຊຽນເອງ ກໍ່ຕ້ອງໄດ້ "**ເພີ່ມທະວີການເຊື່ອມຈອດ ແລະ ຄວາມເຂັ້ມແຂງອາຊຽນ**".

ນອກນັ້ນ, ຄະນະຜູ້ແທນ ຂອງທະນາຄານແຫ່ງ ສປປ ລາວ ກໍ່ຍັງໄດ້ເຂົ້າຮ່ວມກອງປະຊຸມໂຕະມົນສົນທະນາແລກປ່ຽນກ່ຽວກັບການຮ່ວມມືດ້ານສະກຸນເງິນທ້ອງຖິ່ນ ຈີນ-ອາຊຽນ ນໍາອີກດ້ວຍ (China-ASEAN Currency Cooperation Roundtable Conference).





ຂ່າວ-ພາບ ໂດຍ: ຫ້ອງການ ທຫລ

*ຄົນລາວຮັກເມືອງລາວໃຊ້ເງິນກີບລາວ*